ການຂໍອະນຸຍາດປຸກສ້າງ – ກໍລະນີສຶກສາ

ກໍລະນີສຶກສາ (ພາກທີ 1)	
ບໍລິສັດ ບິວໂຄ:	ດຳເນີນກິດຈະການຢູ່ ນະຄອນຫຼວງວຽງຈັນ, ແລະ ເປັນເຈົ້າຂອງ ໂດຍເອກະຊົນພາຍໃນ 100%.
	ມີໃບອະນຸຍາດຄົບວົງຈອນ ແລະ ມີການຮັບປະກັນການດຳເນີນໂຄງການກໍ່ສ້າງ ເຊັ່ນ ການກໍ່ສ້າງສາງເກັບເຄື່ອງ.
	ໄດ້ຈ່າຍອາກອນທີ່ກ່ຽວຂ້ອງທັງໝົດ ແລະ ໄດ້ຈົດທະບຽນ ປະກັນໄພຕໍ່ຄວາມສ່ຽງ ເພື່ອຄຸ້ມຄອງ ກຳມະກອນ ຫຼື ບຸກຄົນທີສາມ ທີ່ ໄດ້ຮັບ ບາດເຈັບ
ກຳມະສິດ ແລະ ພະນັກງານ	ປະກອບມີ ວິສາວະກອນກໍ່ສ້າງ ແລະ ພະນັກງານ ຈຳນວນ 60 ຄົນ ທີ່ມີສັນຊາດພາຍໃນ, ເປັນວິສາວະກອນທີ່ມີຄວາມຊຳນານງານ ແລະ ມີ ປະສົບການຕາມສາຍວິຊາອາຊີບ ທີ່ສຳເປັນໃນການ ຂໍອະນຸຍາດປຸກສ້າງ ແລະ ເອກະສານຢັ້ງຢືນຕ່າງໆ.
	ສະຖາປະນິກ 1 ຄົນ ແລະ ວິສາວະກອນ 1 ຄົນ ທີ່ມີໃບອະນຸຍາດປະກອບອາຊີບ ແລະ ທັງສອງໄດ້ຂຶ້ນທະບຽນເປັນສະມາຊິກ ຂອງ ສະມາຄົມທີ່ ກ່ຽວຂ້ອງ ພາຍໃນປະເທດ.
ເນື້ອທີ່ດິນ ທີ່ ຈະມີການກໍ່ສ້າງສາງເກັບ ມ້ຽນສິນຄ້າ.	ມີເນື້ອທີ່ 929 ຕາເມັດ (10,000 ຟີທມົນທົນ)
	ເປັນເຈົ້າຂອງໂດຍ ບິວໂຄ ແລະ ມີການຈົດທະບຽນ ກັບໜ່ວຍງານ ສຳມະໂນທີ່ດິນ ແລະ ໜ່ວຍງານຄຸ້ມຄອງທີ່ດິນ
	ມີເສັ້ນທາງທີ່ເຂົ້າເຖິງໄດ້ ແລະ ຕັ້ງຢູ່ເຂດຊານເມືອງ ໃກ້ກັບ ນະຄອນຫຼວງວຽງຈັນ (ຕົວຢ່າງ: ຢູ່ ຊາຍແດນຂອງຕົວເມືອງ ແຕ່ມີຂໍ້ຈຳກັດດ້ານສຳ ນັກງານລັດຖະການ). ຕ້ອງບໍ່ນອນຢູ່ໃນເຂດເສດຖະກິດ ຫຼື ເຂດອຸດສາຫະກຳ ທີ່ຕ້ອງມີມາດຖານພິເສດ (ຕົວຢ່າງ: ເຂດປອດພາສີ). ເຖິງຢ່າງໃດ ກໍ່ຕາມ, ການຈັດສັນເຂດສຳລັບ ສາງເກັບມ້ຽນສິນຄ້າ ຈະມີຄວາມຖືກຕ້ອງ ກໍ່ຕໍ່ເມື່ອ ສາງດັ່ງກ່າວ ສ້າງຂຶ້ນຢູ່ເຂດ ທີ່ສາມາດພົບເຫັນ ບັນດາສາງ ເກັບມ້ຽນສິນຄ້າທີ່ ມີລັກສະນະຄ້າຍຄືກັນ.

ການຂໍອະນຸຍາດປຸກສ້າງ – ກໍລະນີສຶກສາ

ກໍລະນີສົມມຸດຖານ (ພາກທີ 2)	
ລັກສະນະສະເພາະ ຂອງ ສາງເກັບມ້ຽນສິນຄ້າ	ມີ ສອງຊັ້ນ, ທັງສອງຊັ້ນດັ່ງກ່າວ ຕ້ອງຢູ່ເໜືອໜ້າດິນ (G + 1), ມີຄວາມກວ້າງ ທັງໝົດ ປະມານ 1,300.6 ຕາແມັດ (14,000 ຟີທມົນທົນ). ແຕ່ລະຊັ້ນ ມີລວງສູງ 3 ແມັດ (9 ຟີທ, 10 ນິ້ວ). ສ້າງດັ່ງກ່າວ ຈະຖືກນຳໃຊ້ເພື່ອເກັບມ້ຽນ ສິນຄ້າທີ່ບໍ່ເປັນອັນຕະລາຍ ແລະ ສິນຄ້າທີ່ບໍ່ເນົ່າເສຍງ່າຍ (ຕົວຢ່າງ: ປຶ້ມ, ເຄື່ອງໃຊ້ຫ້ອງການ ແລະອື່ນໆ).
ການເຊື່ອມຕໍ່ລະບົບນ້ຳປະປາ ແລະ ທໍ່ນ້ຳເສຍ: ການເຊື່ອມຕໍ່ໃໝ່	ສາງເກັບມ້ຽນສິນຄ້າ ຕ້ອງຕັ້ງຢູ່ຫ່າງຈາກ ແຫຼ່ງນ້ຳ ແລະ ທໍ່ລະບາຍນ້ຳເສຍ ທີ່ມີຢູ່ແລ້ວ 150 ແມັດ (492.1 ຟີທ). ມີການນຳໃຊ້ລະບົບບັ້ງດັບເພີງ (ລະບົບດັບເພີງແບບແຫ້ງ). ຖ້າຫາກ ການປ້ອງກັນອັກຄີໄພແບບນ້ຳ ຖືກບັງຄັບໃຊ້ໂດຍກົດໝາຍ, ໃຫ້ສັນນິຖານວ່າ ຄວາມຕ້ອງການນ້ຳທີ່ກຳນົດໄວ້ຂ້າງລຸ່ມນີ້ ແມ່ນຈຳເປັນໃນການປ້ອງກັນອັກຄີໄພ. ປະລິມານການນຳໃຊ້ນ້ຳ ປະຈຳວັນ ແມ່ນ 0.7 ແມັດກ້ອນ, ແລະ ຄາດຄະເນ ປະລິມານໄຫຼວຽນຂອງນ້ຳເສຍ ຢູ່ໃນລະດັບ 0.6 ແມັດກ້ອນ. ຄາດຄະເນປະລິມານການນຳໃຊ້ນ້ຳສູງສຸດ ແມ່ນ 1 ແມັດກ້ອນ.
	ທໍ່ເຊື່ອມຕໍ່ນ້ຳປະປາ ມີ ເສັ້ນຜ່າສູນກາງ 1 ນິ້ວ, ທໍ່ເຊື່ອມນ້ຳເສຍ ມີເສັ້ນຜ່າສູນກາງ 4 ນິ້ວ. ໄດ້ຕິດຕັ້ງຖັງບຳບັດນ້ຳເສຍ ຂະໜາດນ້ອຍທີ່ສຸດ ທີ່ມີຢູ່, ຫຼື ມີການ ກໍ່ຖັງບຳບັດນ້ຳເສຍ ຫາກ ປະເທດດັ່ງກ່າວ ບໍ່ມີ ລະບົບລະບາຍນ້ຳເສຍ ມີການຂຸດນ້ຳບາດານ ຫາກ ປະເທດດັ່ງກ່າວ ບໍ່ມີໂຄງລ່າງເຂົ້າເຖິງນ້ຳປະປາ. ວັດສະດຸທັງໝົດ ແລະ ຄ່າແຮງງານ ຕ້ອງຖືກລວມເຂົ້າໃນ ຄ່າໃຊ້ຈ່າຍ ໃນການເຊື່ອມຕໍ່ນ້ຳປະປາ ແລະ ການລະບາຍນ້ຳເສຍ (ຍົກເວັ້ນ ການເຊື່ອມຕໍ່ຖັງເກັບນ້ຳເໜືອໜ້າດິນທົ່ວໄປ).

ຄາດຄະເນມູນຄ່າ ຂອງສາງ	914,417,149 ກີບ

“ຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍ” ມີຄວາມໝາຍແນວໃດ ຕໍ່ ການຂໍອະນຸຍາດປຸກສ້າງ?

ຄຳຈຳກັດຄວາມ	ຄຳນິຍາມ ອີງຕາມ ການດຳເນີນທຸລະກິດ
ຈຳນວນຂັ້ນຕອນ	ຂັ້ນຕອນ ໝາຍເຖິງ ການຕິດຕໍ່ພົວພັນ ທີ່ເກີດຂຶ້ນ ລະຫວ່າງ ພະນັກງານ ຫຼື ຜູ້ບໍລິຫານ ຂອງ ບໍວໂຄ ກັບພາກສ່ວນພາຍນອກ ລວມທັງ ໜ່ວຍງານລັດຖະບານ, ສຳນັກງານທະບຽນສານ, ສຳນັກງານທະບຽນທີ່ດິນ, ກົມແຜນທີ່, ບໍລິສັດສາທາລະນູປະໂພກ, ຜູ້ກວດກາພາກລັດ ແລະ ເອກະຊົນ ແລະ ຜູ້ຊ່ຽວຊານດ້ານເຕັກນິກ ທີ່ບໍ່ແມ່ນ ສະຖາປະນິກ ແລະ ວິສາວະກອນ ຂອງ ບໍລິສັດ. ບັນດາຂັ້ນຕອນ ທີ່ສາມາດ ປະຕິບັດໃນເວລາດຽວກັນ ກັບ ຂັ້ນຕອນອື່ນ ຈະຖືກໝາຍດ້ວຍເຄື່ອງໝາຍດາວ (*).
ເວລາ	ເວລາ ແມ່ນຄິດໄລ່ຕາມ ວັນໃນປະຕິທິນ (ບໍ່ແມ່ນວັນລັດຖະການ). ສຳລັບຂັ້ນຕອນທີ່ສາມາດສຳເລັດທັງໝົດອອນລາຍ, ໃຊ້ເວລາຕ່ຳສຸດ 0.5 ວັນ. ສຳລັບຂັ້ນຕອນທີ່ບໍ່ສາມາດສຳເລັດໃດ້ທັງໝົດແບບອອນລາຍ ແມ່ນໃຊ້ເວລາຕ່ຳສຸດ 1 ວັນ.
ຄ່າໃຊ້ຈ່າຍ	ຄ່າໃຊ້ຈ່າຍ ລວມເອົາພຽງແຕ່ ຄ່າທຳນຽມຕາມລະບຽບການ. ອາກອນ ທີ່ບໍ່ຕໍ່ເນື່ອງ ຫຼື ການສຳເລັດບາງໂຄງການ ສະເພາະ ກໍຈະຖືກຄິດໄລ່ເຂົ້າໃນຄ່າໃຊ້ຈ່າຍ. ການໃຫ້ສິນບົນ ແລະ ການວາງເງິນຄ້ຳປະກັນ ທີ່ສາມາດຖອນຄືນໄດ້ ຈະບໍ່ຖືກບັນທຶກ.

ການຂໍອະນຸຍາດປຸກສ້າງ-
ດັດສະນີ ການຄວບຄຸມຄຸນນະພາບ ການກໍ່ສ້າງ

ດັດສະນີຄວບຄຸມຄຸນນະພາບການກໍ່ສ້າງ (6.5-15)	ດັດສະນີ	ຄຳຕອບ	ຄະແນນ
ດັດສະນີ ຄຸນນະພາບ ດ້ານລະບຽບການປຸກສ້າງ (0-2)	ກົດໝາຍ ແລະ ລະບຽບການ ດ້ານການປຸກສ້າງ ສາມາດເຂົ້າເຖິງໄດ້ແນວໃດ ໃນປະເທດຂອງທ່ານ ? (0-1)	ບໍ່ສາມາດເຂົ້າເຖິງໄດ້ງ່າຍ	0.0
	ມີມາດຖານໃດ ໃນການ ຂໍອະນຸຍາດປຸກສ້າງ ທີ່ໄດ້ລະບຸໄວ້ຢ່າງຈະແຈ້ງ ໃນລະບຽບການປຸກສ້າງ ຫຼື ບັນດາ ເວັບໄຊ, ຄູ່ມື ຫຼື ແຜ່ນພັບ ທີ່ສາມາດເຂົ້າເຖິງໄດ້ ? (0-1)	ລາຍການເອກະສານທີ່ຕ້ອງປະກອບ	0.0
ດັດສະນີ ການຄວບຄຸມກ່ອນການກໍ່ສ້າງ (1-1)	ມີບຸກຄົນທີສາມ ພາກສ່ວນໃດ ທີ່ກົດໝາຍກຳນົດໃຫ້ ເປັນຜູ້ຢັ້ງຢືນ ວ່າ ແບບ ປຸກສ້າງ ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບ ລະບຽບການ ປຸກສ້າງ ທີ່ມີຢູ່? (0-1)	ຜູ້ທີ່ມີໃບອະນຸຍາດ ສະຖາປະນິກ ແລະ ຜູ້ທີ່ມີໃບ ອະນຸຍາດວິສາວະກອນ.	1.0
ດັດສະນີ ການຄວບຄຸມໃນໄລຍະການກໍ່ສ້າງ (2-3)	ການກວດກາປະເພດໃດ (ຖ້າມີ) ທີ່ກົດໝາຍກຳນົດໃຫ້ ດຳເນີນການກວດກາ ໃນໄລຍະກຳລັງກໍ່ສ້າງ ? (0-2)	ດຳເນີນການກວດກາໂດຍ ວິ ສາວະກອນ ພາຍໃນບໍລິສັດ , ກວດກາ ເປັນແຕ່ລະໄລຍະ ຂອງການກໍ່ສ້າງ.	1.0
	ມີການດຳເນີນການກວດກາ ພາກບັງຄັບ ເກີດຂຶ້ນ ຕົວຈິງ ໃນໄລຍະກໍ່ສ້າງບໍ່? (0-1)	ມີການກວດກາພາກບັງຄັບ ໃນການປະຕິບັດຕົວຈິງສະເໝີ	1.0

ການຂໍອະນຸຍາດປຸກສ້າງ-
ດັດສະນີ ການຄວບຄຸມ ຄຸນນະພາບ ການກໍ່ສ້າງ

ດັດສະນີ ຄວບຄຸມ ຄຸນນະພາບການກໍ່ສ້າງ(6.5-15)	ດັດສະນີ	ຄຳຕອບ	ຄະແນນ
ດັດສະນີ ການຄວບຄຸມພາຍຫຼັງການກໍ່ສ້າງ (3-3)	ມີການກວດກາຄັ້ງສຸດທ້າຍ ທີ່ກົດໝາຍໄດ້ກຳນົດ ເພື່ອຢັ້ງຢືນວ່າ ສິ່ງປຸກສ້າງ ຖືກສ້າງຂຶ້ນໂດຍສອດຄ່ອງກັບ ແຜນວາດ ທີ່ຖືກຮັບຮອງ ແລະ ສອດຄ່ອງກັບລະບຽບການ ບໍ່? (0-2)	ແມ່ນແລ້ວ, ການກວດກາຄັ້ງສຸດທ້າຍ ດຳເນີນການໂດຍໜ່ວຍງານລັດຖະບານ.	2.0
	ມີການກວດກາຄັ້ງສຸດທ້າຍພາກບັງຄັບ ເກີດຂຶ້ນໃນການປະຕິບັດຕົວຈິງ ບໍ່? (0-1)	ມີການກວດກາຄັ້ງສຸດທ້າຍສະເໝີໃນການປະຕິບັດຕົວຈິງ	1.0
ດັດສະນີ ຄວາມຮັບຜິດຊອບ ແລະ ການປະກັນໄພ (0.5-2)	ພາກສ່ວນໃດ (ຖ້າມີ) ທີ່ກົດໝາຍກຳນົດໃຫ້ມີຄວາມຮັບຜິດຊອບ ຕໍ່ຂໍ້ບົກຜ່ອງຂອງການກໍ່ສ້າງ ຫຼື ບັນຫາທີ່ເກີດຂຶ້ນ ເມື່ອສິ່ງປຸກສ້າງຖືກນຳໃຊ້ (ຂໍ້ບົກຜ່ອງທີ່ເບິ່ງບໍ່ເຫັນ ຫຼື ການຮັບປະກັນຫຼັງຈາກສິບປີ) ? (0-1)	ບໍລິສັດ ກໍ່ສ້າງ	0.5
	ພາກສ່ວນໃດ (ຖ້າມີ) ທີ່ກົດໝາຍກຳນົດໃຫ້ ເຮັດປະກັນໄພ ເພື່ອຄຸ້ມຄອງຂໍ້ບົກຜ່ອງດ້ານໂຄງສ້າງ ຫຼື ບັນຫາຕ່າງໆ ເມື່ອ ສິ່ງປຸກສ້າງຖືກນຳໃຊ້ (ປະກັນໄພສຳລັບ ຂໍ້ບົກຜ່ອງທີ່ເບິ່ງບໍ່ເຫັນ ຫຼື ປະກັນໄພສິບປີຫຼັງການກໍ່ສ້າງ) ? (0-1)	ບໍ່ມີຝ່າຍໃດ ທີ່ກົດໝາຍກຳນົດໃຫ້ເຮັດປະກັນໄພ	0.0
ດັດສະນີ ການຢັ້ງຢືນດ້ານວິຊາອາຊີບ(0-4)	ຜູ້ຮັບຜິດຊອບຢັ້ງຢືນ ວ່າການອອກແບບ ຫຼື ແບບແຕ້ມ ສອດຄ່ອງກັບກັບ ລະບຽບການປຸກສ້າງທີ່ມີຢູ່ ຕ້ອງມີມາດຖານໃດແນ່ ? (0-2)	ຕ້ອງໄດ້ຈົດທະບຽນ ຢັ້ງຢືນການເປັນ ນັກສະຖາປະນິກ ຫຼື ວິສາວະກອນ.	0.0
	ຜູ້ຊີ້ນຳການກໍ່ສ້າງພາກສະໜາມ ຕ້ອງມີມາດຖານໃດແດ່ ? (0-2)	ຕ້ອງໄດ້ຈົດທະບຽນ ຢັ້ງຢືນການເປັນ ນັກສະຖາປະນິກ ຫຼື ວິສາວະກອນ.	0.0

ขอบใจ

Thank you!